Quarter III/2016.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

********✧********

**ກະຊວງແຮງງານ ແລະ ສະຫວັດດີການສັງຄົມ**

ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂ

ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ.

ນະຄອນຫຼວງວຽງຈັນ, ວັນທີ.................

**ບົດບັນທຶກກອງປະຊຸມ**

**ປຶກສາຫາລືແຜນວຽກປີ 2017 ສຳລັບວຽກສຳຫຼວດ ແລະ ກວດກູ້ ລບຕ**

**ຄັ້ງວັນທີ 1 ທັນວາ 2016**

## I. ຂໍ້ມູນທົ່ວໄປ:

ກອງປະຊຸມປຶກສາຫາລື ແຜນວຽກປີ 2017 ສຳລັບວຽກສຳຫຼວດ ແລະ ກວດກູ້ ລບຕ ຂອງຂະແໜງແກ້ໄຂບັນຫາ ລບຕ ໄດ້ໄຂຂຶ້ນໃນວັນທີ 1 ທັນວາ 2016, ເວລາ 09:00 ໂມງ ຢູ່ທີ່ຫ້ອງການ ຄຊກລ ຕາມການອະນຸມັດຂອງຫົວໜ້າຫ້ອງການ ຄຊກລ ເລກທີ 414/ຄຊກລ.ຫກ.ກກ, ລົງວັນທີ 28 ພະຈິກ 2016.

ພາຍໃຕ້ການເປັນປະທານຂອງທ່ານ ບຸນພະມິດ ໂສມວິຈິດ, ຮອງຫົວໜ້າຫ້ອງການ ຄຊກລ, ຜູ້ຊີ້ນຳວຽກປະຕິບັດງານ, ມີຜູ້ເຂົ້າຮ່ວມກອງປະຊຸມທັງໝົດ 16 ຄົນ ທີ່ມາຈາກ 6 ອົງການປະຕິບັດງານເກັບກູ້ລະເບີດເພື່ອມະນຸດສະທຳ, ລວມທັງກອງເກັບກູ້ ລບຕ ເພື່ອມະນຸດສະທຳຂອງກອງທັບ, ລາຍລະອຽດຜູ້ເຂົ້າຮ່ວມ ມີ:

1. ທ່ານ ບຸນພະມິດ ໂສມວິຈິດ, ຮອງຫົວໜ້າຫ້ອງການ ຄຊກລ, ປະທານກອງປະຊຸມ
2. ທ່ານ ຫວັນທອງ ຄຳດາລາ, ຮອງຜູ້ອຳນວຍການໂຄງການເກັບກູ້ລະເບີດແຫ່ງຊາດ
3. ທ່ານ ອາແລັນ ໂປສະເຕິນ (Mr Allan Poston), ຫົວໜ້າທີ່ປຶກສາ ອົງການ UNDP
4. ທ່ານ ໂອລີເວ ໂບດູອິນ (Mr Olivier Bauduin), ຫົວໜ້າໂຄງການ ກຸ່ມບໍລິສັດສະເຕີລິງສາກົນ
5. ທ່ານ ພົມມະຈັນ ຄຳມະນີຈັນ, ຫົວໜ້າໜ່ວຍງານກຸ່ມວິຊາການເກັບກູ້, ຫ້ອງການ ຄຊກລ
6. ທ່ານ ຄຳມຸງຄຸນ ສຸດທິວົງ, ຫົວໜ້າໜ່ວຍງານຄຸ້ມຄອງຖານຂໍ້ມູນ, ຫ້ອງການ ຄຊກລ
7. ທ່ານ Neil Arnorld, ຫົວໜ້າປະຕິບັດງານພາກສະໜາມ, ອົງການ ແມັກ ລາວ (MAG)
8. ທ່ານ Jonasz Risson, ຫົວໜ້າອົງການຊ່ວຍເຫຼືອຂອງປະຊາຊົນ ນ໋ອກແວຣ໌ (NPA)
9. ທ່ານ Leonard Kaminski, ຫົວໜ້າປະຕິບັດງານ, ອົງການ HI
10. ທ່ານ ນາງ ສຸຊານາ ສະມານລ໌ (Ms Susanna Smale), ຫົວໜ້າໂຄງການ, ອົງການ ເຮໂລ ທຣາສ໌ (Halo Trust)
11. ທ່ານ ວອນສັກດາ, ຫົວໜ້າຄຸ້ມຄອງຖານຂໍ້ມູນ, ອົງການ ເຮໂລ ທຣາສ໌ທ໌

12. ທ່ານ ຂ້ອນທອງ ພົມມະຫາໄຊ, ຫົວໜ້າກອງກວດກູ້ ລບຕ ກອງທັບ
13. ທ່ານ ບຸນລ້ຽງ ເພັດທະນົງ, ຜູ້ປະສານງານກົມຊ່າງແສງ, ກະຊວງປ້ອງກັນປະເທດ
14. ທ່ານ ພູວຽງສະຫວັນ, ຫົວໜ້າບໍລິຫານຫ້ອງການ, ອົງການ NPA
15. ທ່ານ ບົວເພັດ ພົມມະວົງ, ນັກວິຊາການໜ່ວຍງານເກັບກູ້ ລບຕ, ຫ້ອງການ ຄຊກລ
16. ທ່ານ ບົວພັນ ພັນທະສອນ, ນັກວິຊາການໜ່ວຍງານເກັບກູ້ ລບຕ, ຫ້ອງການ ຄຊກລ

## II. ລາຍລະອຽດການປຶກສາຫາລືຢູ່ກອງປະຊຸມ.

1. ແຜນວຽກສໍາຫຼວດ ລບຕ ແລະ ແຜນເພີ່ມທີມສໍາຫຼວດ ຂອງບັນດາອົງການປະຕິບັດງານ ສໍາລັບປີ 2017. ອີງໃສ່ເນື້ອໃນຈິດໃຈຂອງກອງປະຊຸມປະຈໍາປີ 2016 ຂອງຂະແໜງແກ້ໄຂບັນຫາ ລບຕ ທີ່ຈັດຂຶ້ນລະຫວ່າງວັນທີ 8-9 ພະຈິກ 2016 ທີ່ຜ່ານມາ.

- ແຜນການສໍາຫຼວດບໍ່ແມ່ນວິຊາການຈະໃຫ້ສໍາເລັດພາຍໃນ 3 ປີ ໃນຈໍານວນ 3,162 ບ້ານ ເລີ່ມຈາກປີ 2017 ເປັນຕົ້ນໄປ. ເພື່ອຢາກໃຫ້ສໍາເລັດຕາມໄລຍະເວລາທີ່ກ່າວມານີ້ ຂະແໜງແກ້ໄຂບັນຫາ ລບຕ ຈໍາເປັນຕ້ອງເພີ່ມທີມສໍາຫຼວດບໍ່ແມ່ນວິຊາການຂຶ້ນຕື່ມ ຈາກ 34 ທີມໃນປັດຈຸບັນ ເປັນ 46 ທີມໃນປີ 2017 ແລະ ປີຕໍ່ໄປຈົນຮອດ 2019.

- **ຄວາມຕ້ອງການທີມສໍາຫຼວດບໍ່ແມ່ນວິຊາການ (NTS) ແລະ ທີມສໍາຫຼວດດ້ານວິຊາການ (TS).**

1. **ອົງການເກັບກູ້ລະເບີດແຫ່ງຊາດ (ຄກລ):**

- ປັດຈຸບັນ ຄກລ ມີທີມສໍາຫຼວດບໍ່ແມ່ນວິຊາການ (NTS) ທັງໝົດ 9 ທີມ, ປະຕິບັດວຽກງານຢູ່ 9 ແຂວງ, ແຂວງລະ 1 ທີມ. ຕ້ອງການເພີ່ມທີມ NTS ຕື່ມແຂວງລະ 1 ທີມ; ລວມເປັນ 18 ທີມ. ນອກນີ້, ຍັງຂໍເພີ່ມຕື່ມອີກ 2 ທີມ ເພື່ອສະໜອງໃຫ້ແຂວງຊຽງແຂວງ ແລະ ສະຫວັນນະເຂດ ແຂວງລະ 1 ທີມ ເນື່ອງຈາກວ່າສອງແຂວງເຫຼົ່ານີ້ເປັນແຂວງໃຫຍ່ ຖ້າມີພຽງ 2 ທີມ ຈະບໍ່ພຽງພໍກັບຄວາມຕ້ອງການຂອງວຽກງານ. ເພາະສະນັ້ນ, ຖ້າເປັນໄປຕາມແຜນ ທີມ NTS ຂອງ ຄກລ ໃນປີ 2017 ຈະມີທັງໝົດ 20 ທີມ, 7 ແຂວງຈະມີແຂວງລະ 2 ທີມ ສ່ວນສອງແຂວງ ຄື: ຊຽງຂວາງ ແລະ ສະຫວັນນະເຂດຈະມີແຂວງລະ 3 ທີມ.
- ສໍາລັບທີມ TS, ໃນປັດຈຸບັນ ຄກລ ມີ 9 ທີມ, ປະຕິບັດວຽກງານຢູ່ແຂວງລະໜຶ່ງທີມ ໃນ 9 ແຂວງ. ຄກລ ຂໍເພີ່ມທີມ TS ຕື່ມ 1 ທີມ ໃຫ້ແກ່ແຂວງຊຽງຂວາງ. ຖ້າໄດ້ຕາມການສະເໜີ, ໃນປີ 2017 ຄກລ ຈະມີທີມ TS ຈໍານວນ 10 ທີມ.

2. **ກອງເກັບກູ້ ລບຕ ເພື່ອມະນຸດສະທໍາກອງທັບ (Army Group):**

- ໃນປັດຈຸບັນຍັງບໍ່ມີທີມ NTS, ແຕ່ໄດ້ຂຶ້ນແຜນສ້າງທີມດັ່ງກ່າວແລ້ວ 5 ທີມ ແລະ ຂໍເພີ່ມອີກ 1 ທີມ ເພື່ອດໍາເນີນວຽກງານສໍາຫຼວດບໍ່ແມ່ນວິຊາການຢູ່ໃນ 3 ແຂວງ ຄື: ບໍລິຄໍາໄຊ, ໄຊສົມບູນ ແລະ ແຂວງວຽງຈັນ. ສໍາລັບແຂວງວຽງຈັນ ເປັນແຂວງທີ່ຢູ່ໃນເປົ້າໝາຍຂະຫຍາຍການປະຕິບັດງານອອກໄປສໍາລັບກອງເກັບກູ້ລະເບີດຂອງກອງທັບ ນັບແຕ່ປີ 2017 ເປັນຕົ້ນໄປ.
- ສໍາລັບທີມ TS, ກອງເກັບກູ້ຂອງກອງທັບ ໄດ້ຂຶ້ນແຜນສ້າງທີມດັ່ງກ່າວແລ້ວ 5 ທີມ ແລະ ຈະຂໍເພີ່ມອີກ 1 ທີມ, ລວມເປັນ 6 ທີມ ໃນປີ 2017.
- ປັດຈຸບັນ ກອງກວດກູ້ຂອງກອງທັບມີພຽງແຕ່ທີມກວດກູ້ 5 ທີມ, ປະຕິບັດການກວດກູ້ ລບຕ ຕອບສະໜອງຕາມການສະເໜີຂອງປະຊາຊົນ ແລະ ອໍານາດການປົກຄອງທ້ອງຖິ່ນຢູ່ແຂວງໄຊສົມບູນ.

3. **ອົງການສາກົນເພື່ອຄົນພິການ (HI):**

- ທ່ານ ກາມິນສະກີ ຍັງບໍ່ສາມາດໃຫ້ລາຍລະອຽດໄດ້ຢ່າງເລິກເຊິ່ງຕໍ່ບັນຫາດັ່ງກ່າວ ລວມທັງມາດຕະຖານການປະກອບສ້າງຂອງທີມ NTS ປະກອບມີຈັກຄົນ/ທີມ ແລະ TS ມີຈັກຄົນ/ທີມ. ປະທານກອງປະຊຸມໄດ້ຊີ້ແຈງປຽບທຽບໃຫ້ເຫັນວ່າ ບໍ່ແຕກຕ່າງກັນຫຼາຍລະຫວ່າງອົງການປະຕິບັດງານ, ຄື ຢ່າງ: ຄກລ ມີ 4 ຄົນ/ທີມ ສໍາລັບ NTS ແລະ 11 ຄົນ/ທີມ ສໍາລັບ TS. ກອງເກັບກູ້ຂອງກອງທັບ ມີ 4 ຄົນ/ທີມ ສໍາລັບ NTS ແລະ 13 ຄົນ/ທີມ ສໍາລັບ TS.
- ໃນປີ 2015 ຜ່ານມາ ອົງການ HI ໄດ້ຫຼຸດຈໍານວນທີມລົງ 4 ຈຸ ຍ້ອນບໍ່ມີທຶນພຽງພໍ. ເພາະສະນັ້ນ ຈຶ່ງມີແຜນຂໍເພີ່ມທີມອີກໃຫ້ມີ 4 ຈຸ ຄືຜ່ານມາ ເລີ່ມແຕ່ປີ 2017 ເປັນຕົ້ນໄປ.

4. ອົງການ NPA:

- ອົງການ NPA ບໍ່ໄດ້ເວົ້າເຖິງລາຍລະອຽດໃນການເພີ່ມທີມ. ອາດຍັງຈະນໍາໃຊ້ທີມທີ່ມີໃນປັດຈຸບັນ. ແລະ ຈະເລີ່ມວຽກສໍາຫຼວດຮ່ວມກັບອົງການແມັກ ຢູ່ແຂວງຄໍາມ່ວນໃນລະຫວ່າງເດືອນ ມີນາ ຫຼື ເມສາ 2017. ນອກນັ້ນ ຍັງມີແຜນຈະເຮັດສໍາຫຼວດຢູ່ ແຂວງຫຼວງພະບາງ ຮ່ວມກັບ ຄກລ ໃນປີ 2017 ໂດຍມີແນວໂນ້ມຈະໄດ້ຮັບທຶນຈາກລັດຖະບານສະວີເດັນ. ລາຍລະອຽດກ່ຽວກັບທຶນດັ່ງກ່າວຈະສາມາດຢືນຢັນໄດ້ໃນລະຫວ່າງເດືອນທັນວາ 2016.

5. ອົງການເກັບກູ້ລະເບີດ ແມັກ (MAG):

- ການເພີ່ມທີມ ແມ່ນຂຶ້ນຢູ່ກັບທຶນທີ່ໄດ້ຮັບ, ໃນປັດຈຸບັນຈໍານວນທີມຍັງ 50% ຂອງທີມງານທັງໝົດໂດຍພາຍໃຕ້ທຶນຊ່ວຍເຫຼືອຂອງ WRA.

6. ອົງການ ເຮໂລ ທຣາສທ໌:

- ໃນປັດຈຸບັນ ມີ 14 ທີມສໍາຫຼວດ ທີ່ເຮັດວຽກສໍາຫຼວດບໍ່ແມ່ນວິຊາການ ແລະ ສໍາຫຼວດດ້ານວິຊາການໄປພ້ອມໆກັນ. ສໍາລັບທີມເກັບກູ້ແມ່ນມີ 10 ທີມ ໃນປັດຈຸບັນ. ການເພີ່ມທີມແມ່ນຂຶ້ນຢູ່ກັບທຶນທີ່ຈະໄດ້ຮັບ.

## III. ສັງລວມ:

- **ການສໍາຫຼວດບໍ່ແມ່ນວິຊາການ (NTS):**
- ພາຍໃນ 3 ປີຈະໃຫ້ສໍາເລັດ NTS ຢູ່ໃນ 3,162 ບ້ານ. ຈະເພີ່ມທີມ NTS ຈາກ 34 ທີມ ເປັນ 46 ທີມ ໃນປີ 2017. ຈໍານວນບ້ານ 998 ບ້ານທີ່ສໍາເລັດ NTS ແລ້ວ, ຈະໄດ້ເຮັດ NTS ຄືນໃໝ່ 30 ສ່ວນຮ້ອຍ ຫຼື ປະມານ 300 ກວ່າບ້ານ ຢູ່ແຂວງສາລະວັນ, ເຊກອງ ແລະ ອັດຕະປື ໂດຍຈະສົມທົບກັບອົງການ NPA.
- ການສໍາຫຼວດ ແລະ ກວດກູ້ ແມ່ນເລັງໃສ່ຈຸດສຸມພັດທະນາຂອງສູນກາງ ແລະ ທ້ອງຖິ່ນ.
- ສະມັດຖະພາບຂອງວຽກ NTS ຄື: 1 NTS ທີມ ສາມາດສໍາເລັດ 2 ບ້ານ/ເດືອນ ແລະ ເພື່ອເວລາໄວ້ 1 ເດືອນສໍາລັບລະດູຝົນ.

- **ການສໍາຫຼວດດ້ານວິຊາການ (TS):**
- ພາຍໃນ 5 ປີຂ້າງໜ້າຈະໃຫ້ສໍາເລັດສໍາຫຼວດດ້ານວິຊາການຢູ່ໃນ 2,700 ບ້ານ. ສະເພາະປີ 2017 ໃຫ້ສໍາເລັດ 338 ບ້ານ. ເພາະສະນັ້ນຕ້ອງມີທີມ TS ຈໍານວນ 129 ທີມ, ປັດຈຸບັນມີພຽງ 64 ທີມ.
- ຕາມແຜນ, ຕົ້ນປີ 2017 ລະຫວ່າງເດືອນ ມັງກອນ-ມິຖຸນາ ຈະສ້າງທີມ TS ຕື່ມ 20 ທີມ, ແລະ ນັບແຕ່ເດືອນ ກໍລະກົດ-ທັນວາ 2017 ຈະສ້າງຕື່ມ 45 ທີມ.
- ໂດຍສະເລ່ຍ; TS ໜຶ່ງທີມສາມາດສໍາເລັດ 4-5 ບ້ານ/ປີ.

- ວຽກກອດກູ້ ລບຕ:

- ປັດຈຸບັນມີທີມກອດກູ້ 108 ທີມ ແລະ ຈຳນວນພື້ນທີ່ໆຢືນຢັນວ່າມີ ລບຕ ຕົກຄ້າງ (CHA) ມີປະມານ 30,000 ພັນເຮັກຕາ. ໂດຍສະເລ່ຍ 1 ທີມ ສາມາດກອດກູ້ໄດ້ 41 ເຮັກຕາ/ປີ.
- ມູນຄ່າການກອດກູ້ແມ່ນ ປະມານ 95,000 ດອນລາ/ທີມ/ປີ. ສະເພາະ ຄກລ ຜ່ານມາມູນຄ່າໃຊ້ຈ່າຍສໍາລັບການກອດກູ້ແມ່ນ 86,000 ດອນລາ/ທີມ/ປີ. ມາຮອດປັດຈຸບັນແມ່ນ 95,000 ດອນລາ/ທີມ/ປີ. ເນື່ອງຈາກວ່າ ດິນລະເບີດສະໜອງໃຫ້ບໍ່ພຽງພໍ. ຄກລ ຕ້ອງການດິນລະເບີດ 10 ໂຕນ/ປີ ແຕ່ໃນຕົວຈິງສາມາດສະໜອງໃຫ້ໄດ້ພຽງແຕ່ 5 ໂຕນ/ປີ. ຍ້ອນສາງດິນລະເບີດບໍ່ພຽງພໍ, ສູງສຸດ ສາມາດຮັກສາດິນລະເບີດໄວ້ໃນສາງໄດ້ພຽງແຕ່ 600 ກກ, ຈໍາເປັນຕ້ອງໄດ້ຂົນສົ່ງດິນລະເບີດປີໜຶ່ງເຖິງ 3 ຄັ້ງ, ເປັນສາເຫດໜຶ່ງທີ່ເຮັດໃຫ້ມູນຄ່າການກອດກູ້ເພີ່ມຂຶ້ນ.

IV. ພາກແນະນໍາ:

- ປະທານກອງປະຊຸມ ແນະນໍາໃຫ້ອົງການປະຕິບັດງານສົ່ງແຜນຄວາມຕ້ອງການເພີ່ມທີມ NTS ແລະ TS ໃນປີ 2017 ຢ່າງເປັນລາຍລັກອັກສອນໃຫ້ຫ້ອງການ ຄຊກລ ບໍ່ໃຫ້ກາຍວັນອັງຄານ, ວັນທີ 6 ທັນວາ 2016.

V. ສະຫຼຸບ:

- ກອງປະຊຸມປິດລົງ ເວລາປະມານ 12:00 ໂມງ.

ປະທານກອງປະຊຸມ ຫົວໜ້າໜ່ວຍງານເກັບກູ້